ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ພິທີເປີດ ຊຸດຮຽນທິດສະດີການເມືອງຂັ້ນຕົ້ນ ຊຸດທີ V ຂອງຂະແໜງທະນາຄານ




ໃນວັນທີ 09 ກຸມພາ 2026, ທີ່ສະຖາບັນການທະນາຄານ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດພິທີເປີດຊຸດຮຽນທິດສະດີການເມືອງຂັ້ນຕົ້ນ ຊຸດທີ V ຂອງຂະແໜງທະນາຄານ ໂດຍການເປັນປະທານຂອງ ສະຫາຍ ອາລຸນ ບຸນຍົງ ກຳມະການປະຈຳພັກ, ຮອງຜູ້ວ່າການ ທຫລ ແລະ ໄດ້ຮັບກຽດເຂົ້າຮ່ວມຂອງ ສະຫາຍ ຣສ. ປອ ດາວສະຫວັນ ເຄືອມີໄຊ ກຳມະການສຳຮອງສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກ, ຮອງຫົວໜ້າສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ (ສມປຊ), ມີບັນດາສະຫາຍຄະນະນຳຈາກ ທຫລ, ສມປຊ, ທຫລ, ແຂກຖືກເຊີນ, ຄະນະຮັບຜິດຊອບ ແລະ ນັກຝຶກອົບຮົມທີ່ກ່ຽວຂ້ອງເຂົ້າຮ່ວມທັງໝົດຈຳນວນ 64 ສະຫາຍ.

ການເປີດຊຸດຮຽນທິດສະດີການເມືອງຂັ້ນຕົ້ນໃນຄັ້ງນີ້ ກໍ່ເພື່ອຍົກລະດັບຄວາມຮັບຮູ້ທາງດ້ານທິດສະດີການເມືອງ ໃຫ້ແກ່ພະນັກງານຫຼັກແຫຼ່ງຂອງຂະແໜງທະນາຄານ ໃຫ້ມີຄວາມເຂົ້າໃຈຕໍ່ກັບບັນດາຫຼັກມູນ-ທິດສະດີ ຢ່າງເລິກເຊິ່ງຍິ່ງຂຶ້ນ, ທັງປັບປຸງທັດສະນະຄະຕິ ຄວາມໜັກແໜ້ນດ້ານຄຸນທາດການເມືອງ ແລະ ເພື່ອເປັນກຳລັງແຮງຊ່ວຍຄະນະພັກ-ຄະນະນຳຂັ້ນຕ່າງໆໃນການນຳພາ ປະຕິບັດໜ້າທີ່ການເມືອງຢູ່ຂັ້ນຂອງຕົນ. ພ້ອມນີ້, ຄະນະປະທານໄດ້ຮຽກຮ້ອງໃຫ້ບັນດານັກຮຽນທິດສະດີການເມືອງຂັ້ນຕົ້ນ ຕັ້ງໜ້າຄົ້ນຄວ້າຮໍ່າຮຽນທຸກເນື້ອໃນຕາມການສິດສອນ ແລະ ທິບາຍບົດຮຽນທັງຫຼາຍ ເພື່ອເປັນພື້ນຖານອັນໜັກແໜ້ນໃຫ້ຕົນເອງ ພ້ອມທັງ ຍາດແຍ່ງແລກປ່ຽນບົດຮຽນກັບອາຈານ ແລະ ຕິດຕາມປະກົດການຮຽນຮູ້ແບບຜິວເຜີນ ແລະ ໃຫ້ນັກຮຽນທັງໝົດຈົ່ງປະຕິບັດຕາມກົດລະບຽບ ກໍ່ຄື ຕາຕະລາງ

ຫຼັກສູດການຮຽນ-ການສອນຂອງຊຸດຮຽນຢ່າງເຂັ້ມງວດ ຊຶ່ງຈະດຳເນີນໄປເປັນເວລາ 3 ເດືອນ ນັບແຕ່ວັນ 09 ກຸມພາ 2026 ເປັນຕົ້ນໄປ.





ຂ່າວ-ພາບ: ຫ້ອງການ ທຫລ

ຢູ່ເມືອງລາວໃຊ້ເງິນກີບລາວ